ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ 29 ເດືອນພຶສພາ 2005 ( 5-29-05 )

---

## <u>ມອບມໍຣະດົກແຫ່ງພຣະເຈົ້າໄວ້ໃຫ້ຄົນລຸ້ນຫຼັງ</u>

<u>ຄວາມຈິງໃນພຣະຄັມພີ:</u> ສະມາຊິກໃນຄອບຄົວສາມາດທີ່ຈະຊ່ວຍໃນການມອບມໍຣະດົກແຫ່ງພຣະເຈົ້າໄວ້ໃຫ້ແກ່ຄົນລຸ້ນຫລັງ.
<u>ຂໍ້ພຣະຄັມທີ່ສຳຄັນ:</u> ປະຖົມມະການ : ( 24: 1-4, 12-16 )
<u>ຜົນສະທ້ອນຕໍ່ໃນຊີວິດ:</u> ເພື່ອຊ່ວຍໃຫ້ທ່ານມອບມໍຣະດົກແຫ່ງພຣະເຈົ້າໄວ້ເພື່ອລູກຫຼານໃນອະນາຄົດ.

### ມີມໍຣະດົກແຫ່ງພຣະເຈົ້າອັນໃດແດ່ທີ່ຂ້າພະເຈົ້າສາມາດປະໄວ້ໃຫ້ຄອບຄົວຂອງຂ້າພະເຈົ້າ?

ຄຳວ່າມໍຣະດົກຫມາຍຄວາມວ່າຊັບສິນທີ່ຖືກປະມອບຫມາຍໄວ້ໃຫ້. ຫຼືອາດຈະເປັນສິ່ງໃດສິ່ງນຶ່ງທີ່ເປັນມໍຣະດົກຕົກທອດມາຈາກປູ່ຍ່າຕາຍາຍ. ສິ່ງທີ່ມີຄຸນຄ່າຫຼາຍທີ່ສຸດທີ່ ປູເຊີແລະຈູເລັຽ ເຣວິດ ໄດ້ມອບເປັນມໍຣະດົກໄວ້ໃຫ້ກັບລູກສາວທັງສາມຄົນຄື, ຜູ້ທີ່ຫນຸ່ມນ້ອຍທີ່ສຸດຄືຜູ້ທີ່ເປັນພັລຍາຂ້າພະເຈົ້າທີ່ມີຈິດວິນຍານທີ່ເຂັ້ມແຂງ. ແລະອີກສອງຄົນເປັນຜູ້ທີ່ມີຄວາມເຊື່ອຂອງຄຣິສຕຽນ, ຄວາມຮັກ, ຄວາມຫ່ວງໃຍ, ແລະຄຸນຄ່າຊີວິດທີ່ມີຄ່າສູງດ້ວຍການປັບປຸງຕົວເອງໃຫ້ເປັນແບບຢ່າງແລະສືບຕໍ່ດຳລົງຊີວິດໄປສູ່ຄົນລຸ້ນທີສາມຂອງຄອບຄົວ. ພວກເຮົາອາດຈະບໍ່ມີຊັບສົມບັດແລະສິ່ງຂອງທີ່ມີຄ່າປະໄວ້ໃຫ້ແກ່ລູກຫຼານຂອງເຮົາ, ແຕ່ພວກເຮົາສາມາດມີມໍຣະດົກປະໄວ້ໃຫ້ແກ່ເຂົາເຈົ້າ. ຄຳຖາມນຶ່ງກໍຄືມໍຣະດົດທີ່ເຮົາປະໄວ້ນັ້ນຈະເປັນອັນຕະລາຍຫຼືຈະເປັນພຣະພອນແກ່ເຂົາເຈົ້າ. ບົດຮຽນນີ້ຈະເປັນທີ່ສອນໃຈໃຫ້ພວກເຮົາສວຍໂອກາດທີ່ຈະດຳເນີນຊີວິດໃຫ້ສົມກັບເປັນຜູ້ທີ່ມອບມໍຣະດົກໃຫ້ລູກຫຼານລຸ້ນຕໍ່ໄປຂອງພວກເຮົາ.

1. <u>ຫລີກຈາກຄວາມສັມພັນທີ່ປະນີປະນອມຕໍ່ຄວາມເຊື່ອໃນພຣະເຈົ້າ</u>: ( ປຖກ. 24: 1-4 )

ມີຄູ່ແຕ່ງງານກັນແລ້ວຫຼາຍຄູ່ທີ່ໃຊ້ເວລາຫຼາຍເກີນໄປໃນການທີ່ຈະຮຽນຮູ້ທີ່ຈະຂອບໃຈໃນຄຳສັນຍາໃນການຄອງຊີວິດຄູ່. ຄອບຄົວທີ່ສົມບູນໃນຊີວິດສົມຣົດກໍຄືທັງຜູ້ທີ່ເປັນສາມີແລະທັງຜູ້ເປັນພັລຍາໄດ້ມີການແບ່ງປັນຄວາມສຸກແລະແຍກເຣື່ອງສ່ວນຕົວໄວ້ຕ່າງຫາກແທນຄວາມເຫັນແກ່ຕົວ. ແລະຈະເປັນໄປໄດ້ດີທີ່ສຸດຄືຄູ່ທີ່ມີຄວາມເຊື່ອອັນດຽວກັນແລະມີພື້ນຖານມາຈາກຄຸນຄ່າຊີວິດທີ່ຄືກັນ.

ການປະນີປະນອມໃນຄວາມເຊື່ອສາມາດນຳໄປສູ່ຄວາມຫາຍະນະໄດ້. ຢູດາ. 3: 5-6 ໄດ້ບອກເຖິງເຣື່ອງຜູ້ຊາຍຫຼືຜູ້ຍິງທີ່ແຕ່ງງານກັບຄົນຕ່າງຊາດທີ່ອາສັຍຢູ່ໃນດິນແດນນັ້ນ, ດ້ວຍເຫດຜົນນີ້, ພວກເຂົາຈຶ່ງໄດ້ຫັນຫນີຈາກພຣະເຈົ້າໄປຫາພຣະຂອງຄົນຕ່າງຊາດ. ເຈົ້າຊີວິດໂຊໂລໂມນໄດ້ເປັນແບບຢ່າງໃນເຣື່ອງນີ້ຄືເພິ່ນສາມາດແຕ່ງງານກັບຍິງຕ່າງດ້າວພວກນັ້ນໂດຍບໍ່ຕ້ອງປະນີປະນອມໃນຄວາມເຊື່ອຂອງຕົນເອງ. ເພິ່ນໄດ້ເຮັດຜິດໄປ, ພຣະເຈົ້າໄດ້ກ່າວວ່າ, " ຢ່າເຂົ້າມີສ່ວນແຕ່ງງານກັບພວກເຂົາ.......ເຂົາຈະເຮັດໃຫ້ເຈົ້າຫັນຫນີຈາກເຮົາແຕ່ຫັນໄປຫາພຣະຂອງເຂົາ" ( 1 ກະສັດ 11:2 ) ແລະກໍເປັນຢ່າງນັ້ນແທ້. " ເມື່ອກະສັດຊາໂລໂມນແກ່ເຖົ້າລົງ, ເມັຽຂອງເພິ່ນພວກນັ້ນກໍໄດ້ຊັກຈູງໃຫ້ເພິ່ນ " ຕິດຕາມ " ພຣະອື່ນ " ( ຂໍ້ 4 ) ເພາະເຫດນີ້, ມໍຣະດົກຂອງຊາໂລໂມນຈຶ່ງເປັນອັນຕະລາຍຕໍ່ຄອບຄົວແລະຕໍ່ຣາຊອານາຈັກຂອງເພິ່ນເອງອີກນຳ ( 9-13 )

ຄວາມສລາດຂອງອັບຣາຮາມແມ່ນມີຫຼາຍເກີນກະສັດຊາໂລໂມນໃນເຣື່ອງຂອງການເລືອກຄູ່ທີ່ຈະແຕ່ງງານດ້ວຍ. ສັງຄົມວັທນະທັມໃນເວລາຂອງອັບຣາຮາມນັ້ນ, ພໍ່ຈະເປັນຜູ້ທີ່ອະທິຖານເພື່ອແລະເລືອກລູກໄພ້ໃຫ້ລູກຊາຍທັງຫຼາຍຂອງຕົນ. ອັບຣາຮາມບໍ່ໄດ້ອະນຸຍາດໃຫ້ອີຊາກແຕ່ງງານກັບພວກຜູ້ຍິງຕ່າງດ້າວແລະນັບຖືພຣະອື່ນຄືກັບພວກ

ຜູ້ຍິງທີ່ອາສັຍຢູ່ໃນແຖບໃກ້ໆ ກັນແລະເຖິງບາງຄົນຈະເປັນລູກສາວຂອງຫົວໜ້າຕະກູນກໍຕາມ. ພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາຜ່ານອັບຣາຮາມຈົນເຖິງເຊັ່ນລູກຫຼານຂອງເພິ່ນວ່າຈະໄດ້ຮັບພຣະພອນ ແລະນຳພຣະພອນນີ້ໄປສູ່ທຸກຊົນຊາດໃນໂລກ. ເຫດສະນັ້ນອັບຣາຮາມຈຶ່ງປົກປັກຮັກສາແລະເບິ່ງແຍງໃຫ້ອີຊາກມີສຸຂພາບແຂງແຮງເພື່ອຈຸດປະສົງຂອງພຣະເຈົ້າຈະໄດ້ເປັນຜົນສຳເຣັດ. ເຮັດໜ້າທີ່ຂອງພໍ່ທີ່ດີຄືບໍ່ໃຫ້ອີຊາກຖືກການທົດລອງໄປໄດ້ເມັຽທີ່ເປັນຄົນຕ່າງດ້າວຕ່າງພຣະແລະຫລົງໄຫລນຳເມັຽຫລາຍກວ່າຮັກພຣະເຈົ້າ.

ດຽວນີ້ອັບຣາຮາມກໍເຖົ້າແກ່ຫຼາຍແລ້ວ ແລະບໍ່ສາມາດຈະເດີນທາງກັບໄປຢ້ຽມຢາມຄອບຄົວຂອງນາໂອຜູ້ເປັນນ້ອງເພື່ອຊອກຫາເມັຽທີ່ເໝາະສົມໃຫ້ກັບອີຊາກ. ອັບຣາຮາມໄດ້ມອບຄວາມໄວ້ວາງໃຈແລະມອບໝາຍໜ້າທີ່ໃຫ້ຄົນຮັບໃຊ້ຜູ້ທີ່ໄວ້ໃຈທີ່ສຸດຊຶ່ງເປັນການທົດສອບທີ່ສຳຄັນ. ການວາງມືໃສ່ຫວ່າງຂາແມ່ນສັນຍາລັກຂອງການສາບານແລະຈາລຶກຄຳສັນຍາ ( ຂໍ້ 2 ). ຄົນໃຊ້ຂອງອັບຣາຮາມໄດ້ໃຫ້ຄຳສັນຍາວ່າຈະຫາເມັຽມາໃຫ້ລູກຊາຍຂອງນາຍຈາກຕະກູນດຽວກັນ. ຖ້າຫາກຍິງຜູ້ນັ້ນ " ຍິນດີທີ່ຈະຕິດຕາມ " ຄົນໃຊ້ກັບໄປຍັງການາອານ, ຄືຈະບໍ່ນຳເອົາອີຊາກໄປຫານາງ. ເພາະວ່າອີຊາກນັ້ນພຣະເຈົ້າໄດ້ໃຫ້ສັນຍາທີ່ຈະໄດ້ຮັບພຣະພອນແລະຖືກທົດສອບໃຫ້ຢູ່ນອກ,ນແດນທີ່ພຣະເຈົ້າໄດ້ຊົງປະທານໃຫ້ແກ່ລູກຫຼານເຊັ່ນຕໍ່ໄປຂອງອັບຣາຮາມ ( 5- 9 ).

ຫາກພວກເຮົາໄດ້ຮັບການຊົງບັນດົນໃຈ ໃນການມອບມໍຣະດົກແຫ່ງພຣະເຈົ້າໃຫ້ແກ່ລູກຫຼານລຸ້ນຕໍ່ໄປຂອງເຮົາ ພວກເຮົາຈຳເປັນຕ້ອງຫລີກເວັ້ນຈາກຄວາມສັມພັນໃດໆ ກໍຕາມທີ່ຈະປະນີປະນອມຕໍ່ຄວາມເຊື່ອໃນພຣະເຈົ້າຂອງພວກເຮົາ. ໃນພຣະຄັມພີໃໝ່ໄດ້ເຕືອນພວກເຮົາເຖິງ " ຢ່າຜູກພັນກັບຄົນທີ່ບໍ່ເຊື່ອ: ( 2 ກຣທ. 6: 14 ). ແລະຢ່າໄດ້ຫຼົງຜິດໄປ ການຄົບຄົນຊົ່ວຍ່ອມເສັຽນິສັຍ " ( 1 ກຣທ. 15: 33 ) ຄວາມກົດດັນຈາກໝູ່ເພື່ອນເປັນຄວາມຈິງໃນຊີວິດບໍ່ວ່າຈະຢູ່ຖ້າມກາງພວກຜູ້ໃຫຽ່ຫລືບັນດາຜູ້ທີ່ຍັງໜຸ່ມນ້ອຍ. ພວກເຮົາກໍຫລອກຕົນເອງຫລົ້ນ ຖ້າພວກເຮົາຄິດວ່າຄົນອື່ນບໍ່ສາມາດມີອິດທິພົນເໜືອເຮົາ (ຈູງໃຈເຮົາ).

ເຮົາບໍ່ສາມາດທີ່ຈະຫຼີກໜີຈາກຄົນທີ່ບໍ່ເຊື່ອໃນພຣະເຈົ້າ, ເຖິງແມ່ນວ່າເຮົາຄວນຈະເຮັດຢ່າງນັ້ນກໍຕາມ, ພວກເຮົາຈະຕ້ອງໄດ້ມີການພົວພັນຕິດຕໍ່ກັບຄົນເຫຼົ່ານັ້ນເພື່ອຈະໄດ້ມີໂອກາດທີ່ຈະບອກເຖິງເຣື່ອງຂອງພຣະຜູ້ເປັນເຈົ້າໃຫ້ພວກເຂົາໄດ້ຮູ້. ເຖິງຢ່າງໃດ, ພຣະເຈົ້າກໍຈະຊົງປະທານຈິດວິນຍານທີ່ເຂັ້ມແຂງໃຫ້ແກ່ຜູ້ທີ່ເຊື່ອທັງຫຼາຍເພື່ອຈະໄດ້ເຂົ້າໃກ້ຊິດກັບຄົນທີ່ຍັງຢູ່ໃນຄວາມມືດ. ນີ້ຄືເຫດຜົນນຶ່ງທີ່ຈະສາມາດເຮັດໃຫ້ຄົນໃນຄອບຄົວມີຄວາມສາມັກຄີ, ໃຫ້ການໜູນໃຈແລະສົ່ງເສີມກັນ ເພື່ອພວກເຮົາຈະໄດ້ດຳຣົງຊີວິດທີ່ເດີນຄຽງຄູ່ໄປກັບພຣະຜູ້ເປັນເຈົ້າຂອງເຮົາທັງຫຼາຍ ( ເຮັບເຣີ10: 24-25 ).

2. <u>ອະທິຖານເພື່ອຄົນອື່ນແລະການຕັດສິນໃຈຂອງເຂົາເຈົ້າ</u>. ( ປຖກ. 24 : 12-16 )

ແຜນການຂອງອັບຣາຮາມທຸກຢ່າງແມ່ນເພື່ອເຮັດວຽກງານຂອງພຣະເຈົ້າໃຫ້ເກີດຜົນເຕັມບໍຣິບູນ. ຜູ້ຮັບໃຊ້ທີ່ໄດ້ຖືກມອບໝາຍຈະຕ້ອງມີເຄື່ອງໝາຍດັ່ງນີ້: ( 1 )ໃຫ້ຄຳສັນຍາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ ( 2 )ບອກຄົນອື່ນກ່ຽວກັບຄຳສັນຍາທີ່ພຣະເຈົ້າໃຫ້ໄວ້ກັບອັບຣາຮາມ, ແລະ ( 3 ) ການຮັບກັນເຣື່ອງການຊ່ວຍເຫຼືອຈາກພຣະເຈົ້າ ( ປຖກ. 24: 3, 7 ).

ໃນພຣະຄັມພີໃໝ່ໄດ້ບອກເຖິງຜູ້ທີ່ເຊື່ອທຸກຄົນເຮັດວຽກງານການຮັບໃຊ້ ເພື່ອໃຫ້ພຣະປະສົງຂອງພຣະເຈົ້າໃຫ້ເກີດຜົນສຳເຣັດ ( ອຟຊ. 2: 10 ). ພວກເຮົາຈະຕ້ອງຖວາຍຕົວຕໍ່ອົງພຣະຜູ້ເປັນເຈົ້າ ເຮົາມີພຣະຄຳຂອງພຣະອົງທີ່ເຕືອນນິສັຍແລະການກະທຳຂອງພວກເຮົາ, ແລະເຮົາມີຄຳສັນຍາວ່າພຣະວິນຍານເປັນຜູ້ໃຫ້ກຳລັງແລະນຳພາໃນການຮັບໃຊ້ວຽກງານຂອງພຣະອົງທີ່ມອບໝາຍໃຫ້ພວກເຮົາເຮັດ.

ທ່ານເດຈະຍອມຮັບບໍ່ວ່າຍິ່ງພວກເຮົາມີປະສົບການຫລາຍຂຶ້ນແລະຈະເຣີນເຕີບໃຫຽ່ຂຶ້ນ, ພວກເຮົາກໍຍິ່ງເພິ່ງໃນຕົນເອງຫລາຍກວ່າເພິ່ງໃນອົງພຣະຜູ້ເປັນເຈົ້າ? ໃນເມື່ອເຮົາໝົດປັນຍາ, ພວກເຮົາຈຶ່ງອະທິຖານຕໍ່ພຣະເຈົ້າເພື່ອໃຫ້ພຣະອົງຊົງນຳແລະເພີ້ມເຣື່ອແຮງໃຫ້. ເຖິງຢ່າງໃດ, ເມື່ອພວກເຮົາມີປະສົບການຊີວິດພຽງເລັກນ້ອຍ ເຮົາມັກຈະເພິ່ງໃນຄວາມເຂົ້າໃຈແລະຄວາມສາມາດຂອງເຮົາເອງ. ການພະຍາຍາມທີ່ຈະດຳຣົງຊີວິດເພື່ອພຣະຜູ້ເປັນເຈົ້າແລະ

ເຮັດວຽກງານຂອງພຣະອົງທຸກຢ່າງຕາມຄວາມສາມາດທີ່ມີຈຳກັດຂອບເຂດຂອງມະນຸດ ເປັນການຝຶກຝົນອັນໄຮ້ປະໂຫຍດແລະໝົດຫວັງ. ເພື່ອຈະມອບມໍຣະດົກແຫ່ງພຣະເຈົ້າໃຫ້ແກ່ຄອບຄົວຂອງເຮົາ, ພວກເຮົາຈະຕ້ອງຮຽນເອົາແບບຢ່າງຈາກຜູ້ຮັບໃຊ້ພຣະເຈົ້າຄືອັບຣາຮາມ.

ຜູ້ຮັບໃຊ້ທີ່ດີບໍ່ແມ່ນຈະເຮັດວຽກງານທຸກຢ່າງຕາມໃຈຕົນເອງຫຼືຕາມເຫື່ອແຮງ, ສະຕິປັນຍາແລະຄວາມສາມາດຂອງຕົນເອງ. ລາວບໍ່ໄດ້ເຮັດຕາມປະສົບການ, ຄວາມຊຳນານແລະການຕັດສິນໃຈຂອງຕົນເອງ. ລາວໄດ້ນຳໂຕອູດ 10 ໂຕ ( ປຖກ. 24: 10 ). ເມື່ອລາວໄປເຖິງໃນເມືອງທີ່ ນາໂຮ ນ້ອງຊາຍຂອງອັບຣາຮາມອາສັຍຢູ່, " ລາວໄດ້ບອກໃຫ້ໂຕອູດທັງໝົດຄຸເຂົ່າລົງ " ໃກ້ງ ນ້ຳສ້າງ( ຂໍ້ 11 ) ຫຼັງຈາກນັ້ນລາວກໍໄດ້ອະທິຖານຕໍ່ພຣະເຈົ້າຂໍໃຫ້ພຣະອົງຊົງປະທານ ກຳລັງແລະ ຄວາມສຳເຣັດໃນການທີ່ຈະໄປເຮັດວຽກງານຄັ້ງນີ້, ແລະປະທານໃຫ້ວຽກງານແຕ່ລະວັນທີ່ລາວຈະໄດ້ເຮັດໃຫ້ສຳເລັດລຸລ່ວງໄປດ້ວຍດີ. ຕາມປະເພນີສມັຍນັ້ນຜູ້ຍິງຈະເປັນຜູ້ໄປຕັກນ້ຳຈາກນ້ຳສ້າງທີ່ຢູ່ໃກ້ເພື່ອນຳກັບໄປບ້ານສຳລັບການໃຊ້ໃນເຮືອນທຸກຢ່າງ. ລາວໄດ້ອະທິຖານເພື່ອຜູ້ຍິງທີ່ພຣະເຈົ້າຈະປະທານໃຫ້ອີຊາກນັ້ນຈະເປັນຄົນທີ່ຖາມ ເອົານ້ຳໃຫ້ລາວດື່ມ ອີກທັງເອົາ ໃຫ້ອູດຂອງລາວດື່ມອີກດ້ວຍ - ສິ່ງນີ້ບໍ່ແມ່ນຂໍ້ທົດສອບນ້ອຍໆ. ກ່ອນທີ່ຈະຈົບຄຳອະທິຖານ, ມີຍິງສາວທີ່ງາມ, ບໍ່ທັນໄດ້ແຕ່ງງານເທື່ອແລະເປັນລູກສາວຂອງ ນາໂຮ, ນ້ອງຊາຍຂອງອັບຣາຮາມເອງ. ນາງຄື ລາເບັກກາ ໄດ້ປາກົດຕົວທີ່ນ້ຳສ້າງພໍດີ.

ໃນຂໍ້ 17-27 ໄດ້ອະທິບາຍເຖິງພຣະເຈົ້າໄດ້ຕອບຄຳອະທິຖານຂອງຄົນໃຊ້, ຄືນາງມີຄວາມຍິນດີທີ່ຈະຕັກນ້ຳໃຫ້ລາວດື່ມແລະໃຫ້ໂຕອູດທຸກໂຕໄດ້ກິນນ້ຳຈົນອີ່ມ. ລາວໄດ້ຖາມນາງວ່າເປັນລູກຫຼານຂອງໃຜເພື່ອທີ່ລາວຈະໄດ້ຕິດຕາມໄປຫາຄອບຄົວຂອງນາງ. ເມື່ອນາງໄດ້ບອກເຣື່ອງລາວຕ່າງໆ ແລ້ວທັງໄດ້ເຊີນໃຫ້ລາວໄປພັກທີ່ບ້ານຂອງນາງເພາະມີບ່ອນໃຫ້ພັກເຊົາຢູ່, ລາວກໍໄດ້ເອົາຂອງຂວັນທີ່ມີຄ່າມອບໃຫ້ນາງ, ແລະລາວກໍໄດ້ກົ້ມລົງອະທິຖານແລະນະມັສການພຣະເຈົ້າເວົ້າວ່າ " ຂອບພຣະຄຸນພຣະຜູ້ເປັນເຈົ້າ...ພຣະອົງໄດ້ນຳຂ້ານ້ອຍໃຫ້ໄດ້ກັບໄປເຖິງບ້ານເຮືອນຂອງພີ່ນ້ອງຂອງເຈົ້ານາຍຂ້ານ້ອຍດ້ວຍ" ( 26-27 ).

> ພວກເຮົາໂງ່ຈ້າເທົ່າໃດໃນການທີ່ມີຄວາມເຮັ່ງຮີບເຮັດທຸກສິ່ງໂດຍບໍ່ລໍຖ້າອະທິຖານຕໍ່ພຣະເຈົ້າກ່ອນ. ມີພຽງພຣະອົງຜູ້ດຽວເທົ່ານັ້ນທີ່ສາມາດຢັ່ງຮູ້ທຸກສິ່ງທີ່ຈະເກີດຂຶ້ນໃນແຕ່ລະວັນ.

ພຣະອົງຈະຊົງຕຽມພ້ອມວຽງງານທີ່ເຫມາະສົມໃຫ້ແກ່ພວກເຮົາ, ແຕ່ພວກເຮົາພາດໂອກາດຄືບໍ່ໄດ້ມີຄວາມສົນໃຈແລະເອົາແຕ່ຄວາມອວດເກັ່ງຂອງຕົນເອງເຮັດໄປໂດຍອັຕໂນມັດ. ຂໍພວກເຮົາຈົ່ງຕຽມພ້ອມໃນການອະທິຖານໃນເຣື່ອງຄົນທັງຫຼາຍທີ່ຈະຕັດສິນໃຈເຮັດສິ່ງໃດໃນການດຳຣົງຊີວິດຢູ່ແຕ່ລະວັນ.

3. <u>ເຮັດຕາມການຊີ້ນຳຂອງພຣະເຈົ້າເພື່ອຄອບຄົວຂອງທ່ານ</u>: ( ປຖກ. 24: 50-51, 61-67 )

ຄົນໃຊ້ຂອງອັບຣາຮາມໄດ້ເລົ່າເຣື່ອງທຸກຢ່າງໃນການຮັບໜ້າທີ່ຄັ້ງນີ້ຕໍ່ຄອບຄົວຂອງນາງ ລາເບັກກາ ແລະການຕອບຄຳອະທິຖານຈາກພຣະເຈົ້າທີ່ໄດ້ພົບນາງທີ່ນ້ຳສ້າງແລະນາງກໍເຮັດທຸກສິ່ງຕາມຄຳອະທິຖານຂອງລາວ, ຄືພຣະເຈົ້າໄດ້ນຳລາວໃຫ້ມາພົບກັບເຈົ້າສາວທີ່ເຫມາະສົມໃຫ້ແກ່ອີຊາກ. ແລະພໍ່ຂອງນາງກໍເຂົ້າໃຈທຸກຢ່າງທີ່ຄົນໃຊ້ຂອງອັບຣາຮາມໄດ້ເລົ່າໃຫ້ຟັງແຕ່ພໍ່ຂອງນາງກໍຍັງບໍ່ຍິນຍອມທີ່ຈະໃຫ້ນາງໄປກັບຄົນໃຊ້ນັ້ນ.

ໃນຂະນະທີ່ອ້າຍແລະພໍ່ຂອງເກຫູລາໄດ້ຍິນການໃຫ້ຄຳພະຍານຂອງຄົນໃຊ້ນີ້ແລ້ວ, ພວກເຂົາກໍເຫັນພ້ອມ ວ່າທຸກຢ່າງເປັນໄປຕາມແຜນການຂອງພຣະຜູ້ເປັນເຈົ້າແທ້ ແລະກໍເຫັນດີໃຫ້ລາເບັກກາໄປແຕ່ງງານກັບອີຊາກເພາະນາງກໍຖືກລ້ຽງດູແລະເຕີບໃຫຍ່ໃນຄວາມເຊື່ອພຣະເຈົ້າອົງດຽວເຫມືອນກັນແລະຄວນເຮັດຕາມຄຳສັ່ງຂອງພຣະເຈົ້າ. ພຣະເຈົ້າເປັນຜູ້ບອກທາງໂດຍຜ່ານພຣະຄຳຂອງພຣະອົງແລະຈະຊົງປະທານຄວາມເຂົ້າໃຈແລະຕິດຕາມເຖິງແມ່ນວ່າຈະມີຄວາມແຕກຕ່າງແລະບໍ່ຄືເກົ່າກໍຕາມ. ຄອບຄົວຂອງທ່ານເດໄດ້ຮັບພຣະພອນຕາມທີ່ພຣະເຈົ້າໄດ້ຊົງຈັດແຈງໃຫ້ເປັນ

ປົກກະຕິຢູ່ບໍ່!  ແມ່ນມໍຣະດົກອັນໃດທີ່ທ່ານຈະປະໄວ້ໃຫ້ແກ່ຄົນລຸ້ນຫລັງ!

ນາງລາເບັກກາ ກໍຍິນຍອມທີ່ຈະຕິດຕາມດ້ວຍການຊີ້ງນໍາຂອງພຣະຜູ້ເປັນເຈົ້າ ( ປຖມກ. 24: 58 ),  ນາງ ແລະຄົນໃຊ້ຂອງນາງຈໍານວນນຶ່ງໄດ້ເດີນທາງຮ່ວມກັບ " ຄົນໃຊ້ຂອງອັບຣາຮາມແລະຜູ້ຕິດຕາມ " ( ຂໍ້ 59 )ຈຸດປະສົງ ທຸກຢ່າງໃນການເຮັດທຸກສິ່ງໃນຄັ້ງນີ້ເພື່ອອີຊາກກໍໄດ້ເຖີງຈຸດໝາຍໂດຍສົມບູນ.   ດ້ວຍຄວາມຄິດທີ່ຮອບຄອບ,  ບໍ່ມີ ຄວາມສົງໃສ,ແລະອະທິຖານດ້ວຍໃຈໂມທະນາແລະເຮັດຕາມຄໍາສັ່ງຂອງພຣະເຈົ້າໂດຍບໍ່ມີຂໍ້ໂຕ້ແຍ້ງແຕ່ຢ່າງໃດ, ໃນ ວຽກງານທີ່ພຣະເຈົ້າຊີ້ງປະທານໃຫ້. ການເຂົ້າເຝົ້າພຣະເຈົ້າສ່ວນຕົວເປັນສິ່ງທີ່ສໍາຄັນຫລາຍຕໍ່ການມອບມໍຣະດົກແຫ່ງ ພຣະເຈົ້າໄວ້ໃຫ້ຄົນລຸ້ນຫລັງ.

| |
|---|
| ພວກເຮົາມີຄວາມໂງ່ຈ້າຫຼາຍປານໃດທີ່ຄິດວ່າຕົວເອງເປັນຜູ້ທີ່ມີສິນທັມແລະເຂົ້າໃຈທຸກເຣື່ອງລາວດ້ວຍການ ອ່ານພຣະຄັມພີແລະອະທິຖານຢ່າງຟ້າວຟັ່ງ, ແລະນະມັສການພໍເປັນພິທີເທົ່ານັ້ນ. |

ທ່ານຈະສາມາດຮຽນຮູ້ຈາກບົດຮຽນໃນອາທິດນີ້ຄື:

- ຫຼີກເວັ້ນຈາກຄວາມສັມພັນທີ່ປະນີປະນອມກັບຄວາມເຊື່ອໃນພຣະເຈົ້າ.
- ອະທິຖານເພື່ອທຸກຄົນທີ່ມີສ່ວນກ່ຽວຂ້ອງໃນຊີວິດຂອງທ່ານແລະເພື່ອການຕັດສິນໃຈໃນແຕ່ລະວັນ ແລະ ການຕັດສິນໃຈໃນໄລຍະຍາວຂອງທ່ານ.
- ເຮັດຕາມການຊີ້ນໍາຂອງພຣະເຈົ້າເພື່ອຕົວທ່ານເອງແລະທຸກຄົນໃນຄອບຄົວ.

ອຸປຖັມໂດຍ ລາວຊາວເທີນແບັບຕິສ  WWW. LSBF.org